ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---- 000 ----

ທະນາຄານແຫ່ງ ສປປ ລາວ

ເລກທີ 01 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 APR 2016

# ຄໍາແນະນໍາການຈັດຕັ້ງປະຕິບັດ
# ດໍາລັດວ່າດ້ວຍສະຖາບັນການເງິນຈຸລະພາກ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມດໍາລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
- ອີງຕາມໜັງສືສະເໜີຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ /ກຄສງ, ລົງວັນທີ

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຄໍາແນະນໍາ ດັ່ງນີ້:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຄໍາແນະນໍາສະບັບນີ້ ວາງອອກເພື່ອຜັນຂະຫຍາຍເນື້ອໃນບາງມາດຕາຂອງດໍາລັດວ່າດ້ວຍສະຖາບັນການເງິນຈຸລະພາກ ໃຫ້ມີຄວາມຊັດເຈນ ແນໃສ່ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດດໍາລັດດັ່ງກ່າວ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2. ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຄໍາແນະນໍາສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ທຶນຄົງທີ່ ໝາຍເຖິງອາຄານ ແລະ ທີ່ດິນ;
2. ທຶນທີ່ເປັນວັດຖຸ ໝາຍເຖິງທຶນທີ່ເປັນຊັບສົມບັດຄົງທີ່ ເຊັ່ນ: ພາຫະນະ, ຄອມພິວເຕີ, ໂຕະ, ຕັ່ງ;
3. ທຶນໝູນວຽນ ໝາຍເຖິງ ທຶນທີ່ເປັນເງິນ;
4. ສາຂາ ໝາຍເຖິງພາກສ່ວນໜຶ່ງຂອງສະຖາບັນການເງິນຈຸລະພາກທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ ຕາມຂອບເຂດສິດຂອງຕົນ ຊຶ່ງສາມາດສ້າງຕັ້ງໄດ້ໃນຂອບເຂດທີ່ມີສໍານັກງານໃຫຍ່ຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ;

5. ໜ່ວຍບໍລິການ ໝາຍເຖິງພາກສ່ວນໜຶ່ງຂອງສະຖາບັນການເງິນຈຸລະພາກທີ່ໄດ້ຮັບອະນຸຍາດເພື່ອດຳເນີນທຸລະກິດສ່ວນໃດສ່ວນໜຶ່ງ ຕາມການມອບໝາຍຂອງສຳນັກງານໃຫຍ່ຂອງຕົນ ແລະ ຕາມການເຫັນດີຈາກທະນາຄານແຫ່ງ ສປປ ລາວ;
6. ເງິນກູ້ຈຸລະພາກ ໝາຍເຖິງເງິນກູ້ຂະໜາດນ້ອຍທີ່ມີວົງເງິນກູ້ສູງສຸດບໍ່ເກີນ ຫ້າສິບລ້ານ (50.000.000) ກີບ.
7. ພາກສ່ວນທີ່ມີສາຍພົວພັນ ໝາຍເຖິງ:
   - ອົງການກວດສອບບັນຊີ ຫຼື ຜູ້ກວດສອບບັນຊີ ທີ່ເຮັດໜ້າທີ່ກວດສອບບັນຊີຂອງສະຖາບັນການເງິນຈຸລະພາກ;
   - ບຸກຄົນ ຫຼື ວິສາຫະກິດ ທີ່ມີຮຸ້ນຫຼາຍກວ່າ ສິບ (10) ສ່ວນຮ້ອຍ ຂອງທຶນໃນສະຖາບັນການເງິນຈຸລະພາກ;
   - ບໍລິສັດທີ່ມີສະມາຊິກສະພາບໍລິຫານ, ຄະນະຜູ້ບໍລິຫານ ຫຼື ຜູ້ອຳນວຍການ ຫຼື ພະນັກງານທີ່ຮັບຜິດຊອບຕໍ່ການປະເມີນ ແລະ ອະນຸມັດເງິນກູ້, ບຸກຄົນທີ່ເປັນຍາດຕິພີ່ນ້ອງສາຍຕັ້ງ ເຊັ່ນ: ພໍ່, ແມ່, ພໍ່-ແມ່ລ້ຽງ, ສາມີ, ພັນລະຍາ, ລູກດີ່ງ, ລູກລ້ຽງ ຫຼື ອ້າຍ, ເອື້ອຍ, ນ້ອງ ແລະ ຍາດສາຍຂວາງ ເຊັ່ນ: ລູກເຂີຍ, ລູກໃພ້, ພໍ່ເຖົ້າ, ແມ່ເຖົ້າ, ລຸງ, ປ້າ, ອາວ, ອາ ຂອງສະມາຊິກສະພາບໍລິຫານ, ຄະນະຜູ້ບໍລິຫານ ຫຼື ຜູ້ອຳນວຍການຂອງສະຖາບັນການເງິນຈຸລະພາກທີ່ຖືຮຸ້ນ ເທົ່າກັບ ຫຼື ຫຼາຍກວ່າສິບ (10) ສ່ວນຮ້ອຍ ຂອງທຶນສະຖາບັນການເງິນຈຸລະພາກ;
   - ນິຕິບຸກຄົນທີ່ສະຖາບັນການເງິນຈຸລະພາກຖືຮຸ້ນຢູ່;
8. ເງິນກູ້ປົກກະຕິ ໝາຍເຖິງເງິນກູ້ທີ່ສາມາດປະຕິບັດການຊຳລະໄດ້ຕາມເງື່ອນໄຂໃນສັນຍາຢ່າງຄົບຖ້ວນ;
9. ເງິນກູ້ທີ່ບໍ່ເກີດດອກອອກຜົນ ໝາຍເຖິງເງິນກູ້ທີ່:
   - ຕົ້ນທຶນ ແລະ ດອກເບ້ຍທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ບໍ່ສາມາດຊຳລະໄດ້ຕາມແຜນການທີ່ໄດ້ກຳນົດໄວ້ ຊຶ່ງຄ້າງຊຳລະນັບແຕ່ ສາມສິບເອັດ (31) ວັນ ຂຶ້ນໄປ;
   - ຕົ້ນທຶນ ແລະ ດອກເບ້ຍທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ບໍ່ສາມາດຊຳລະໄດ້ຕາມແຜນການທີ່ກຳນົດໄວ້ ຊຶ່ງຄ້າງຊຳລະນັບແຕ່ ສາມສິບເອັດ (31) ວັນ ຂຶ້ນໄປ ໃນໝວດເງິນກູ້ທີ່ປັບປຸງໂຄງສ້າງໜີ້.
10. ເອກະສານທາງບັນຊີ ໝາຍເຖິງບັນຊີແຍກປະເພດທົ່ວໄປ, ບັນທຶກປະຈຳວັນ, ບັນທຶກເງິນສົດ, ໃບສົມທົບບັນຊີຕ່າງໆ ແລະ ເອກະສານທາງບັນຊີອື່ນໆ ທີ່ຈົດກ່າຍດ້ວຍມື, ບັນທຶກໄວ້ໃນຄອມພິວເຕີ ຫຼື USB ທີ່ສະຖາບັນການເງິນຈຸລະພາກນຳໃຊ້;
11. ຕົວແທນ ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງເປັນຜູ້ຕາງໜ້າໃຫ້ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງເພື່ອດຳເນີນທຸລະກິດ, ເຈລະຈາ, ເຊັນສັນຍາ ແລະ/ຫຼື ດຳເນີນທຸລະກຳຕ່າງໆ;
12. ພາກສ່ວນທີ່ກ່ຽວຂ້ອງໝາຍເຖິງ: ເຈົ້າໜ້າທີ່, ຂະແໜງຕຸລາການ, ອົງການປົກຄອງ ແລະ ອື່ນໆທີ່ກ່ຽວຂ້ອງ;
13. ໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ໝາຍເຖິງ: ໜັງສືຢັ້ງຢືນທາງດ້ານຫຼັກການເພື່ອໃຫ້ຜູ້ຂໍອະນຸຍາດດຳເນີນທຸລະກິດໄດ້ກະກຽມເງື່ອນໄຂໃຫ້ຄົບຖ້ວນເຊັ່ນ: ປະກອບວັດຖຸເຕັກນິກ, ບຸກຄະລາກອນ ແລະ ຖອກທຶນຈົດທະບຽນ. ໃບອະນຸຍາດຊົ່ວຄາວມີກຳນົດເວລານຳໃຊ້ ເກົ້າສິບ (90) ວັນ;

14. ໃບອະນຸຍາດດຳເນີນທຸລະກິດຖາວອນ ໝາຍເຖິງ: ໜັງສືອະນຸຍາດໃຫ້ດຳເນີນທຸລະກິດການເງິນຈຸລະພາກຢ່າງເປັນທາງການ;
15. ເງິນສົດຄ້າງຄັງ ໝາຍເຖິງ ເງິນສົດທີ່ມີໃນຂອງສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກ.

**ມາດຕາ 3. ຂອບເຂດການນຳໃຊ້**

ຄຳແນະນຳສະບັບນີ້ ມີຜົນບັງຄັບໃຊ້ຕໍ່ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ໂຄງການການເງິນຈຸລະພາກ, ສາຂາ ແລະ ໜ່ວຍບໍລິການຂອງສະຖາບັນການເງິນຈຸລະພາກດັ່ງກ່າວ.

**ມາດຕາ 4. ທີ່ຕັ້ງ**

ສະຖາບັນການເງິນຈຸລະພາກ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ ສາມາດເປີດສຳນັກງານໃຫຍ່, ສາຂາ ຫຼື ໜ່ວຍບໍລິການ ໃນຂອບເຂດທົ່ວປະເທດ ຕາມການອະນຸຍາດ ຢ່າງເປັນລາຍລັກອັກສອນ ຈາກທະນາຄານແຫ່ງ ສປປ ລາວ.

ກໍລະນີມີການຍົກຍ້າຍທີ່ຕັ້ງສຳນັກງານ (ສຳນັກງານໃຫຍ່, ສາຂາ ຫຼື ໜ່ວຍບໍລິການ) ຕ້ອງໄດ້ຮັບການອະນຸຍາດຢ່າງເປັນລາຍລັກອັກສອນ ຈາກທະນາຄານແຫ່ງ ສປປ ລາວ.

## ໝວດທີ II
## ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ

**ມາດຕາ 5. ສຳນວນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງປະກອບສຳນວນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ດັ່ງນີ້:

1. ບົດວິພາກເສດຖະກິດ ແລະ ແຜນການດຳເນີນທຸລະກິດ ສາມ (3) ປີ ຊຶ່ງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:
   - ພາກສະເໜີ;
   - ຈຸດປະສົງ;
   - ແຫຼ່ງທຶນ;
   - ໂຄງຮ່າງການຈັດຕັ້ງ;
   - ຂອບເຂດ ຫຼື ຮູບແບບການເຄື່ອນໄຫວ;
   - ການຄາດຄະເນລາຍຮັບ-ລາຍຈ່າຍ ສາມ (3) ປີ;
   - ການສຶກສາທ່າອ່ຽງຂອງຕະຫຼາດ;
   - ສະຫຼຸບ.
2. ຊີວະປະຫວັດຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ບໍລິຫານໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ;

- ກໍລະນີເປັນບຸກຄົນ ຫຼື ນິຕິບຸກຄົນຈາກຕ່າງປະເທດ ແມ່ນອີງການຄຸ້ມຄອງແຫ່ງຊາດ ຫຼື ສະຖານທູດຂອງຕົນເປັນຜູ້ຢັ້ງຢືນ.

3. ໃບແຈ້ງໂທດ ຫຼື ໜັງສືຜ່ານແດນຂອງຜູ້ບໍລິຫານ (ສໍາລັບຜູ້ຖືຮຸ້ນທີ່ເປັນຕ່າງປະເທດ);
4. ເອກະສານຢັ້ງຢືນຖານະການເງິນຂອງຜູ້ຖືຮຸ້ນຊຶ່ງປະກອບດ້ວຍ:
   - ຜູ້ຖືຮຸ້ນທີ່ເປັນບຸກຄົນ ຕ້ອງມີເອກະສານຕົ້ນຕໍ ເຊັ່ນ: ສໍາເນົາບັນຊີສໍາຮອງເງິນຝາກປະຢັດ ຫຼື ເງິນຝາກປະຈໍາຢ່າງໜ້ອຍ ຫົກ (6) ເດືອນ ຢັ້ງຢືນໂດຍທະນາຄານກ່ຽວຂ້ອງ, ໃບຢັ້ງຢືນກໍາມະສິດໃນຊັບສິນ ຫຼື ວັດຖຸທີ່ປະກອບເປັນທຶນ, ໃບແຈ້ງສະຫຼຸບຊັບສິນບັດ, ໃບແຈ້ງຊັບສິນ-ໜີ້ສິນ ຫຼື ເອກະສານການກູ້ຢືມທຶນ ແລະ ແຈ້ງທີ່ມາຂອງແຫຼ່ງທຶນ;
   - ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ຕ້ອງມີເອກະສານຕົ້ນຕໍ ເຊັ່ນ: ສໍາເນົາບັນຊີສໍາຮອງເງິນຝາກຢ່າງໜ້ອຍ ສອງ (2) ປີ ຢັ້ງຢືນໂດຍທະນາຄານກ່ຽວຂ້ອງ, ບົດກວດສອບພາຍນອກ ສອງ (2) ປີ ຍ້ອນຫຼັງ, ແຈ້ງຊັບສິນ-ໜີ້ສິນ ຫຼື ເອກະສານການກູ້ຢືມທຶນ ແລະ ແຈ້ງທີ່ມາຂອງເງິນລົງທຶນ.

**ມາດຕາ 6. ໂຄງປະກອບທຶນຈົດທະບຽນ**

ທຶນຈົດທະບຽນປະກອບດ້ວຍ ທຶນທີ່ເປັນເງິນ ແລະ ທຶນທີ່ເປັນວັດຖຸ. ໃນນັ້ນທຶນທີ່ເປັນເງິນຕ້ອງມີຢ່າງໜ້ອຍ ເກົ້າສິບ (90) ສ່ວນຮ້ອຍ ຂອງທຶນຈົດທະບຽນ ແລະ ທຶນທີ່ເປັນວັດຖຸສູງສຸດ ສິບ (10) ສ່ວນຮ້ອຍ ຂອງທຶນຈົດທະບຽນ.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາມາດເພີ່ມ ຫຼື ຫຼຸດທຶນຈົດທະບຽນຂອງຕົນໄດ້ ຕາມການເຫັນດີຢ່າງເປັນລາຍລັກອັກສອນຈາກທະນາຄານແຫ່ງ ສປປ ລາວ ຊຶ່ງການຫຼຸດທຶນດັ່ງກ່າວ ຕ້ອງບໍ່ຕໍ່າກວ່າລະດັບທຶນຈົດທະບຽນທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງດໍາລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ເລກທີ 460/ລບ, ລົງວັນທີ 3 ຕຸລາ 2012.

**ມາດຕາ 7. ການລົງທຶນໃນວິສາຫະກິດ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ມີຖານະການເງິນດີ ສາມາດລົງທຶນໃນວິສາຫະກິດອື່ນໄດ້ບໍ່ເກີນ ສິບ (10) ສ່ວນຮ້ອຍ ຂອງທຶນຈົດທະບຽນ.

**ມາດຕາ 8. ການລົງທຶນຂອງຕ່າງປະເທດ**

ບຸກຄົນ, ນິຕິບຸກຄົນຕ່າງປະເທດ ສາມາດລົງທຶນໃນສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຊຶ່ງອັດຕາສ່ວນການຖືຮຸ້ນຂອງຕ່າງປະເທດຕໍ່າສຸດ ສິບ (10) ສ່ວນຮ້ອຍ ແຕ່ສູງສຸດ ສາມສິບ (30) ສ່ວນຮ້ອຍ ຂອງທຶນຈົດທະບຽນ.

ສໍາລັບການນໍາເຂົ້າທຶນຂອງຜູ້ຖືຮຸ້ນຕ່າງປະເທດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ລະບຽບການທີ່ກ່ຽວຂ້ອງ ແລະ ແຈ້ງເປັນລາຍລັກອັກສອນໃຫ້ ທະນາຄານແຫ່ງ ສປປ ລາວ ຊາບ.

**ມາດຕາ 9. ການອະນຸຍາດດໍາເນີນທຸລະກິດ**

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດດໍາເນີນທຸລະກິດຊົ່ວຄາວໃຫ້ຜູ້ຂໍດໍາເນີນທຸລະກິດພາຍໃນ ສາມສິບ (30) ວັນ ນັບແຕ່ວັນໄດ້ຮັບສໍານວນຄໍາຮ້ອງຖືກຕ້ອງ ແລະ ຄົບຖ້ວນ ຕາມເງື່ອນໄຂດັ່ງນີ້:

1. ຕ້ອງມີຜູ້ຖືຮຸ້ນຢ່າງໜ້ອຍ ຫ້າ (5) ຄົນ ໃນນັ້ນຕ້ອງມີຜູ້ຖືຮຸ້ນລາຍໃຫຍ່ ໜຶ່ງ (1) ຄົນ ຖືຮຸ້ນ ຊາວ (20) ສ່ວນຮ້ອຍ ຂຶ້ນໄປ ແຕ່ສູງສຸດບໍ່ໃຫ້ເກີນ ສີ່ສິບ (40) ສ່ວນຮ້ອຍ ຂອງທຶນຈົດທະບຽນ.
2. ຜູ້ບໍລິຫານຕ້ອງມີປະສົບການດ້ານການທະນາຄານ, ການບັນຊີ ຫຼື ການເງິນຈຸລະພາກ ມາກ່ອນຢ່າງໜ້ອຍ ສອງ (2) ປີ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດຖາວອນພາຍໃນ ສາມສິບ (30) ວັນ ນັບແຕ່ວັນທີ່ຜູ້ຂໍດຳເນີນທຸລະກິດໄດ້ປະຕິບັດເງື່ອນໄຂຄົບຖ້ວນດັ່ງນີ້:

1. ໄດ້ຖອກທຶນຈົດທະບຽນໄວ້ນຳທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານແຫ່ງ ສປປ ລາວ ປະຈຳພາກ;
2. ໄດ້ຜ່ານການກວດກາສະຖານທີ່, ການປະກອບວັດຖຸເຕັກນິກ ແລະ ຄວາມພ້ອມໃນການໃຫ້ບໍລິການ.

ກໍລະນີທີ່ບໍ່ເຫັນດີອະນຸຍາດດ້ວຍເຫດຜົນໃດກໍຕາມ, ທະນາຄານແຫ່ງ ສປປ ລາວ ຈະແຈ້ງເຫດຜົນຢ່າງເປັນລາຍລັກອັກສອນກ່ຽວກັບການປະຕິເສດພາຍໃນ ສິບຫ້າ (15) ວັນລັດຖະການ, ຜູ້ຮ້ອງຂໍສາມາດປັບປຸງແກ້ໄຂຂໍ້ບົກຜ່ອງທີ່ເປັນສາເຫດນັ້ນໃຫ້ຖືກຕ້ອງ ແລະ ຄົບຖ້ວນ ພາຍໃນກຳນົດຫົກສິບ (60) ວັນ ແລ້ວ ສາມາດຍື່ນຄຳຮ້ອງດັ່ງກ່າວຫາທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາຄືນໃໝ່.

### ມາດຕາ 10. ຄ່າທຳນຽມ ແລະ ຄ່າບໍລິການ

ຜູ້ຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງຈ່າຍຄ່າທຳນຽມ ແລະ ບໍລິການໃນການຄົ້ນຄວ້າອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ຊຶ່ງມີລາຍລະອຽດດັ່ງນີ້:

1. ຄ່າທຳນຽມຍື່ນເອກະສານ:
   - ສຳລັບສຳນັກງານໃຫຍ່ ຈຳນວນ ສາມລ້ານ (3.000.000) ກີບ;
   - ສຳລັບສາຂາ ຈຳນວນ ໜຶ່ງລ້ານ (1.000.000) ກີບຕໍ່ໜຶ່ງສາຂາ;
2. ຄ່າບໍລິການໃນການຄົ້ນຄວ້າອອກໃບອະນຸຍາດດຳເນີນທຸລະກິດ:
   - ສຳລັບສຳນັກງານໃຫຍ່ທີ່ມີທຶນຈົດທະບຽນ ແຕ່ຈຳນວນ ສາມຕື້ (3.000.000.000) ກີບ ຂຶ້ນໄປ ແມ່ນສູນຈຸດຫ້າ (0,5) ສ່ວນຮ້ອຍ ຂອງທຶນຈົດທະບຽນ;
   - ສຳລັບການຂະຫຍາຍສາຂາທີ່ມີທຶນຈົດທະບຽນ ໜຶ່ງຕື້ (1.000.000.000) ກີບ ຂຶ້ນໄປ ແມ່ນສູນຈຸດຫ້າ (0,5) ສ່ວນຮ້ອຍຂອງທຶນຈົດທະບຽນ;
3. ຜູ້ຂໍອະນຸຍາດດຳເນີນທຸລະກິດທີ່ຍື່ນຄຳຮ້ອງຄືນໃໝ່ ແຕ່ສອງ (2) ຄັ້ງຂຶ້ນໄປ ຕ້ອງຈ່າຍຄ່າທຳນຽມ ຕາມທີ່ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

ສຳລັບສຳນວນຄຳຮ້ອງທີ່ຖືກປະຕິເສດຈາກທະນາຄານແຫ່ງ ສປປ ລາວ, ຜູ້ຂໍອະນຸຍາດສາມາດປັບປຸງແກ້ໄຂຂໍ້ຄົງຄ້າງ ຫຼື ປະກອບເອກະສານຄືນໃໝ່ພາຍໃນກຳນົດ ສາມສິບວັນ (30) ວັນ ໂດຍບໍ່ຕ້ອງເສຍຄ່າທຳນຽມ ແລະ ຄ່າບໍລິການໃໝ່ອີກ.

### ມາດຕາ 11. ການຊຳລະຄ່າທຳນຽມເອກະສານ ແລະ ຄົ້ນຄວ້າອະນຸຍາດດຳເນີນທຸລະກິດ

ຜູ້ຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງຊຳລະຄ່າທຳນຽມໃນເວລາຍື່ນສຳນວນຄຳຮ້ອງຕໍ່ທະນາຄານແຫ່ງ ສປປ ລາວ. ຄ່າທຳນຽມຍື່ນເອກະສານດັ່ງກ່າວ

ບໍ່ສາມາດຖອນຄືນໄດ້, ສໍາລັບຄ່າບໍລິການຄົ້ນຄວ້າອະນຸຍາດດໍາເນີນທຸລະກິດ ຕ້ອງຊໍາລະກ່ອນວັນໄດ້ຮັບໃບອະນຸຍາດດໍາເນີນທຸລະກິດຖາວອນ.

**ມາດຕາ 12. ຄ່າຄຸ້ມຄອງປະຈໍາປີ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງຈ່າຍຄ່າຄຸ້ມຄອງປະຈໍາປີໃຫ້ ທະນາຄານແຫ່ງ ສປປ ລາວ ໃນເດືອນມັງກອນ ຂອງແຕ່ລະປີ ຈໍານວນ ສູນຈຸດສູນສອງ (0,02) ສ່ວນຮ້ອຍຂອງຊັບສິນສະເລ່ຍ ຫຼື ຢ່າງໜ້ອຍ ສູນຈຸດສອງ (0,2) ສ່ວນຮ້ອຍ ຂອງທຶນຈົດທະບຽນ.

**ມາດຕາ 13. ເງື່ອນໄຂການຂະຫຍາຍສາຂາ ແລະ ໜ່ວຍບໍລິການ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາມາດຂະຫຍາຍສາຂາ ແລະ ໜ່ວຍບໍລິການໄດ້ ຖ້າຫາກມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ສາມາດປະຕິບັດລະບຽບຄວາມໝັ້ນຄົງຂອງທະນາຄານແຫ່ງ ສປປ ລາວ ວາງອອກ ໃນນັ້ນອັດຕາສ່ວນຄວາມພຽງພໍຂອງທຶນຕ້ອງບໍ່ຫຼຸດ ສິບສອງ (12) ສ່ວນຮ້ອຍ;
2. ກົດລະບຽບພາຍໃນທີ່ປະກອບດ້ວຍໂຄງຮ່າງການຈັດຕັ້ງໃນການຄຸ້ມຄອງສາຂາ;
3. ບົດລາຍງານການກວດສອບພາຍນອກ ຈາກບໍລິສັດກວດສອບທີ່ໄດ້ຮັບອະນຸຍາດຈາກ ກະຊວງການເງິນ;
4. ຄະນະຜູ້ບໍລິຫານຂັ້ນສູງຕ້ອງມີຄວາມຮູ້-ຄວາມສາມາດດ້ານການເງິນ, ການທະນາຄານ ຫຼື ການບັນຊີ;
5. ຕ້ອງມີພະນັກງານວິຊາການທີ່ມີຄວາມຮູ້-ຄວາມສາມາດ, ມີລະບົບໂປຼແກຼມຄຸ້ມຄອງການບັນຊີ-ການລາຍງານ, ມີນະໂຍບາຍ ແລະ ຄູ່ມືໃນການດໍາເນີນງານ;
6. ທຸກການຂະຫຍາຍສາຂາ ແລະ ໜ່ວຍບໍລິການ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ.

**ມາດຕາ 14. ສາຂາ ແລະ ໜ່ວຍບໍລິການ**

ສາຂາຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງປະກອບມີສໍານັກງານ ຫຼື ຫ້ອງການທີ່ໄດ້ມາດຕະຖານ, ປະກອບວັດຖຸອຸປະກອນຄົບຖ້ວນເພື່ອຮັບປະກັນໃຫ້ແກ່ການບໍລິການ.

ສາຂາສາມາດເຄື່ອນໄຫວດໍາເນີນທຸລະກິດ ຕາມສິດຂອບເຂດທີ່ສໍານັກງານໃຫຍ່ມອບໝາຍ, ສາຂາມີສິດອະນຸມັດເງິນກູ້ຕໍ່ລູກຄ້າລາຍໜຶ່ງບໍ່ເກີນ ສິບລ້ານ (10.000.000) ກີບ, ລາຍກຸ່ມບໍ່ເກີນຊາວລ້ານ (20.000.000) ກີບ ແຕ່ບໍ່ເກີນສິບກຸ່ມ. ກໍລະນີທີ່ມີລາຍກຸ່ມແຕ່ສິບເອັດກຸ່ມຂຶ້ນໄປ ຕ້ອງຂໍອະນຸມັດຈາກສໍານັກງານໃຫຍ່ຢ່າງເປັນລາຍລັກອັກສອນ.

ສາຂາຕ້ອງສະຫຼຸບລາຍງານການເຄື່ອນໄຫວຖານະການເງິນ ໃຫ້ແກ່ສໍານັກງານໃຫຍ່ຢ່າງເປັນປົກກະຕິປະຈໍາເດືອນ, ໄຕມາດ ແລະ ປີ. ສໍາລັບສາຂາ ແລະ ໜ່ວຍບໍລິການ ທີ່ຕັ້ງຢູ່ບ່ອນມີສາຂາຂອງທະນາຄານແຫ່ງ ສປປ ລາວ ຕ້ອງມີບົດລາຍງານໃຫ້ສາຂາທະນາຄານແຫ່ງ ສປປ ລາວ, ສາຂາ ແລະ ໜ່ວຍບໍລິການສະຖາບັນການເງິນຈຸລະພາກ ທີ່ຂຶ້ນກັບການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ສໍານັກງານໃຫຍ່ ແມ່ນໃຫ້ສໍານັກງານໃຫຍ່ຂອງສະຖາບັນການເງິນສັງລວມ ແລະ ລາຍງານກົມຄຸ້ມຄອງສະຖາບັນການເງິນ ຢ່າງເປັນປົກກະຕິ.

ໜ່ວຍບໍລິການ ສາມາດເຄື່ອນໄຫວເປັນຕົວແທນໃຫ້ແກ່ສາຂາໃນການຮັບເງິນຝາກ, ຈ່າຍເງິນກູ້ ແລະ ເກັບກູ້ໜີ້ ຕາມການມອບໝາຍຂອງສຳນັກງານໃຫຍ່.

ໜ່ວຍບໍລິການຕ້ອງສະຫຼຸບລາຍງານການຮັບເງິນຝາກ, ການຈ່າຍເງິນກູ້ ແລະ ລາຍການໜີ້ທີ່ເກັບກູ້ໄດ້ ໃຫ້ແກ່ສາຂາຂອງສະຖາບັນການເງິນຈຸລະພາກເປັນປະຈຳວັນ, ອາທິດ ແລະ ເດືອນ.

**ມາດຕາ 15. ທຸລະກຳການເງິນຈຸລະພາກ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາມາດດຳເນີນທຸລະກິດ ດັ່ງນີ້:

1. ຮັບເງິນຝາກຈາກມວນຊົນທົ່ວໄປເປັນເງິນກີບ ເຊັ່ນ:
   - ເງິນຝາກປະຢັດ;
   - ເງິນຝາກມີກຳນົດ 3 ເດືອນ, 6 ເດືອນ, 9 ເດືອນ, 12 ເດືອນ, 24 ເດືອນ ຫຼື 36 ເດືອນ;
2. ປ່ອຍເງິນກູ້ຈຸລະພາກເປັນເງິນກີບສູງສຸດບໍ່ເກີນ ຫ້າສິບລ້ານ (50.000.000) ກີບ;
3. ຕ້ອງປ່ອຍເງິນກູ້ຈຸລະພາກໃຫ້ໄດ້ຢ່າງໜ້ອຍ ແປດສິບ (80) ສ່ວນຮ້ອຍ ຂອງຍອດສິນເຊື່ອທັງໝົດ. ໃນນັ້ນ ປ່ອຍເງິນກູ້ໃຫ້ແກ່ເພດຍິງບໍ່ໃຫ້ຫຼຸດ ສິບ (10) ສ່ວນຮ້ອຍ;
4. ສາມາດປ່ອຍເງິນກູ້ໃຫ້ແກ່ລູກຄ້າລາຍໃຫຍ່ລວມທັງເຄືອຂ່າຍຂອງຕົນໄດ້ບໍ່ໃຫ້ເກີນ ຊາວ (20) ສ່ວນຮ້ອຍຂອງຍອດສິນເຊື່ອທັງໝົດ, ໃນນັ້ນ ປ່ອຍໃຫ້ລູກຄ້າລາຍໜຶ່ງຕ້ອງບໍ່ໃຫ້ເກີນ ສິບ (10) ສ່ວນຮ້ອຍ ຂອງຍອດສິນເຊື່ອທັງໝົດ;
5. ສາມາດເປັນຕົວແທນໃຫ້ການບໍລິການໂອນເງິນພາຍໃນປະເທດ;
6. ສາມາດເປັນຕົວແທນໃຫ້ແກ່ບໍລິສັດປະກັນໄພ.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ມີຖານະການເງິນໝັ້ນຄົງສາມາດກູ້ຢືມເງິນຈາກພາຍນອກ ທັງພາຍໃນ ແລະ ຕ່າງປະເທດ ແມ່ນບໍ່ໃຫ້ເກີນ ສາມສິບ (30) ສ່ວນຮ້ອຍ ຂອງຍອດສິນເຊື່ອຂອງສະຖາບັນການເງິນ. ສຳລັບອັດຕາສ່ວນການກູ້ຢືມເງິນຈາກພາຍນອກ ແລະ ການນຳເຂົ້າເງິນກູ້ທີ່ເປັນເງິນຕາຕ່າງປະເທດ ຕ້ອງໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນ ຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 16. ການກຳນົດອັດຕາດອກເບ້ຍ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາມາດກຳນົດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຕາມກົນໄກຕະຫຼາດ ຫຼື ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ. ການຄິດໄລ່ດອກເບ້ຍເງິນກູ້ທີ່ມີວົງເງິນ ແຕ່ຫ້າລ້ານໜຶ່ງ (5.000.001) ກີບ ຂຶ້ນໄປ ຕ້ອງປະຕິບັດແບບວິທີຫຼຸດລົງ ຫຼື ຄິດໄລ່ດອກເບ້ຍຕາມຍອດເຫຼືອຂອງເງິນກູ້ຄ້າງຊຳລະ, ສ່ວນການຄິດໄລ່ດອກເບ້ຍເງິນກູ້ທີ່ມີວົງເງິນຕໍ່າກວ່າຫ້າລ້ານ (5.000.000) ກີບ ແມ່ນສາມາດຄິດໄລ່ອັດຕາດອກເບ້ຍແບບຄົງທີ່.

ສະຖາບັນການເງິນຕ້ອງ ແຈ້ງໃຫ້ລູກຄ້າຊາບກ່ອນຈະມີການເຊັນສັນຍາເງິນກູ້ກ່ຽວກັບຄ່າທຳນຽມ ແລະ ອັດຕາດອກເບ້ຍ ທີ່ຕ້ອງໄດ້ຊຳລະສຳລັບເງິນກູ້ດັ່ງກ່າວ.

**ມາດຕາ 17. ຂໍ້ຫ້າມ**

ຫ້າມສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ເຄື່ອນໄຫວໃຫ້ບໍລິການ ດັ່ງນີ້:

1. ໃຫ້ບໍລິການປ່ອຍກູ້ ຫຼື ຮັບເງິນຝາກ ເປັນເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
2. ກໍານົດເງື່ອນໄຂພິເສດໃຫ້ແກ່ພາກສ່ວນທີ່ມີສາຍພົວພັນ ເພື່ອເອື້ອອໍານວຍຜົນປະໂຫຍດໃນການນໍາໃຊ້ບໍລິການຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
3. ໃຫ້ບໍລິການອື່ນໆ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເຊັ່ນ:
   - ເຮັດທຸລະກໍາເຊົ່າສິນເຊື່ອ;
   - ຊື້-ຂາຍເງິນ, ຄໍາ ຫຼື ວັດຖຸມີຄ່າຕ່າງໆ, ຊື້-ຂາຍວັດຖຸດິບ ແລະ ສິນຄ້າອື່ນໆ;
   - ໃຫ້ບໍລິການຊໍາລະສະສາງຜ່ານບັນຊີແຊັກ;
   - ເຮັດໜັງສືການຊື້-ຂາຍລ່ວງໜ້າ;
   - ອອກໜັງສືສິນເຊື່ອ ຫຼື ໜັງສືຄໍ້າປະກັນຄືກັບທະນາຄານ, ອອກໜັງສືຄໍ້າປະກັນການປະມູນ ແລະ ໜັງສືຄໍ້າປະກັນແບບພັນທະບັດ ຫຼື ໜັງສືຄໍ້າປະກັນອື່ນໆ;
   - ສະໜອງການບໍລິການປະກັນໄພ ແລະ ທຸລະກໍາການໂອນໃນຖານະເປັນເຈົ້າຂອງທຸລະກິດ;
   - ຊື້-ຂາຍ ຫຼື ດໍາເນີນທຸລະກິດກ່ຽວກັບອະສັງຫາລິມະຊັບ (ທີ່ດິນ, ອາຄານ ຫຼື ສິ່ງປຸກສ້າງຕ່າງໆ ຍົກເວັ້ນໃນກໍລະນີເພື່ອນໍາໃຊ້ສໍາລັບສະຖາບັນ);
   - ເປີດບັນຊີຂອງສະຖາບັນການເງິນຢູ່ຕ່າງປະເທດ;
   - ຊື້-ຂາຍຫຼັກຊັບ;
   - ຊື້ຂາຍເງິນຕາຕ່າງປະເທດລ່ວງໜ້າ;
   - ອື່ນໆ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 18. ການສັ່ງໂຈະ ແລະ ຖອນໃບອະນຸຍາດ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ພາຍຫຼັງໄດ້ຮັບການແຈ້ງເຕືອນຈາກທະນາຄານແຫ່ງ ສປປ ລາວ ແຕ່ບໍ່ປະຕິບັດຕາມແຈ້ງເຕືອນນັ້ນ, ທະນາຄານແຫ່ງ ສປປ ລາວ ຈະສັ່ງໂຈະການເຄື່ອນໄຫວໃຫ້ບໍລິການເປັນການຊົ່ວຄາວ ຈົນກວ່າຈະຈັດຕັ້ງປະຕິບັດຕາມແຈ້ງເຕືອນດັ່ງກ່າວ. ການໂຈະການເຄື່ອນໄຫວດັ່ງກ່າວຢູ່ໃນໄລຍະບໍ່ເກີນ ຫົກ (6) ເດືອນ.

ໃບອະນຸຍາດດໍາເນີນທຸລະກິດຂອງສະຖາບັນການເງິນ ຈະຖືກຖອນໃນກໍລະນີດັ່ງນີ້:

1. ມີການລະເມີດມາດຕາ 35 ຂອງດໍາລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
2. ບໍ່ສາມາດເຄື່ອນໄຫວທຸລະກິດພາຍໃນກໍານົດ ເກົ້າສິບ (90) ວັນ ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດດໍາເນີນທຸລະກິດເປັນຕົ້ນໄປ;
3. ຖືກສານຕັດສິນບໍ່ໃຫ້ເຄື່ອນໄຫວທຸລະກິດດ້ານການເງິນ;
4. ບໍ່ປະຕິບັດຕາມແຈ້ງການ ຫຼື ມາດຕະການແກ້ໄຂຂໍ້ຄົງຄ້າງຕ່າງໆ ຂອງທະນາຄານແຫ່ງ ສປປ ລາວ ຫຼື ພາກສ່ວນທີ່ກ່ຽວຂ້ອງ;
5. ບໍ່ສາມາດເຄື່ອນໄຫວດໍາເນີນທຸລະກິດໂດຍບໍ່ມີເຫດສົມຜົນ;
6. ມີການລະເມີດດໍາລັດວ່າດ້ວຍສະຖາບັນການເງິນຈຸລະພາກ ເລກທີ 460/ລບ, ລົງວັນທີ 3 ຕຸລາ 2012, ຄໍາແນະນໍາສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 19. ການຮັກສາຄວາມໝັ້ນຄົງ

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງປະຕິບັດອັດຕາສ່ວນທາງດ້ານການເງິນ ເພື່ອຮັກສາຄວາມໝັ້ນຄົງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ເຊັ່ນ:

1. ອັດຕາສ່ວນທຶນຕໍ່ຊັບສິນທີ່ໄດ້ວາງນ້ຳໜັກຄວາມສ່ຽງຢ່າງໜ້ອຍ ສິບສອງ (12) ສ່ວນຮ້ອຍ ຫຼື ຕາມການປ່ຽນແປງຂອງທະນາຄານແຫ່ງ ສປປ ລາວ ວາງອອກ;
2. ອັດຕາສ່ວນເງິນສົດໃນຄັງຢ່າງໜ້ອຍ ສີ່ (4) ສ່ວນຮ້ອຍ ຊຶ່ງມີວິທີຄິດໄລ່ຄື: ເງິນສົດທັງໝົດ ຫານໃຫ້ ເງິນຝາກທັງໝົດ;
3. ອັດຕາສ່ວນສະພາບຄ່ອງທັງໝົດຢ່າງໜ້ອຍ ຊາວ (20) ສ່ວນຮ້ອຍ ຊຶ່ງມີວິທີຄິດໄລ່ຄື: (ເງິນສົດທັງໝົດ ບວກໃຫ້ ເງິນຝາກຢູ່ທະນາຄານ ຫຼື ສະຖາບັນການເງິນອື່ນ) ຫານໃຫ້ ໜີ້ສິນທັງໝົດ.

### ມາດຕາ 20. ການເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງເກັບຮັກສາເອກະສານ ແລະ ສ້າງລະບົບຂໍ້ມູນໄວ້ໃນສຳນັກງານໃຫຍ່ຂອງຕົນ ທັງເປັນສຳນວນເອກະສານ ແລະ ດ້ວຍລະບົບເອເລັກໂຕຼນິກ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 21. ລະບອບບັນຊີ

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ຕ້ອງຈັດຕັ້ງປະຕິບັດບັນຊີການເງິນຈຸລະພາກທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ບັນຊີວິສາຫະກິດ ຕາມກົດໝາຍວ່າດ້ວຍການບັນຊີທີ່ນຳໃຊ້ໃນແຕ່ລະໄລຍະ ຕາມປີປະຕິທິນ.

### ມາດຕາ 22. ການພິມເຜີຍແຜ່ບົດລາຍງານການເງິນ

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕ້ອງເຜີຍແຜ່ຖານະການເງິນຂອງຕົນ ໂດຍສະເພາະ ບົດລາຍງານການເງິນປະຈຳປີ ຜ່ານສື່ມວນຊົນ ໂດຍທາງໜັງສືພິມ, ໂທລະພາບ, ວິທະຍຸ ຫຼື ເວບໄຊ ພາຍຫຼັງໄດ້ຮັບການກວດສອບຈາກພາຍນອກ ພາຍໃນກຳນົດ ຫ້າ (5) ວັນລັດຖະການ ຕິດຕໍ່ກັນ.

### ມາດຕາ 23. ຄະນະຊຳລະສະສາງກໍລະນີຍຸບເລີກ

ຄະນະຊຳລະສະສາງປະກອບດ້ວຍບຸກຄົນທີ່ມາຈາກຂະແໜງການກ່ຽວຂ້ອງ ເຊັ່ນ: ທະນາຄານແຫ່ງ ສປປ ລາວ, ສານປະຊາຊົນ, ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ, ອົງການປົກຄອງທ້ອງຖິ່ນ, ຄະນະສະພາບໍລິຫານ ແລະ ຜູ້ບໍລິຫານຂອງສະຖາບັນການເງິນ.

## ໝວດທີ III
## ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ໂຄງການການເງິນຈຸລະພາກ

### ມາດຕາ 24. ທຶນຈົດທະບຽນ

ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງມີທຶນຈົດທະບຽນຕ່ຳສຸດ ສອງຮ້ອຍລ້ານ (200.000.000) ກີບ. ກໍລະນີທີ່ສະຖາບັນ ມີທຶນຫຼາຍກວ່າ ສາມຕື້ (3.000.000.000) ກີບ ສາມາດສ້າງເງື່ອນໄຂຫັນໄປເປັນ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ.

ທຶນຈົດທະບຽນ ສາມາດນຳໃຊ້ໄດ້ດັ່ງນີ້:

1. ປະກອບວັດຖຸເຕັກນິກ ສິບ (10) ສ່ວນຮ້ອຍ ຂອງທຶນຈົດທະບຽນ;
2. ປ່ອຍເງິນກູ້ໃຫ້ແກ່ລູກຄ້າເປັນເງິນກີບ;

ສຳລັບການຂະຫຍາຍສາຂາ ແລະ ໜ່ວຍບໍລິການຂອງ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແມ່ນໃຫ້ປະຕິບັດຄືກັນກັບເງື່ອນໄຂການຂະຫຍາຍສາຂາ ແລະ ໜ່ວຍບໍລິການ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຕາມມາດຕາ 13 ແລະ 14 ຂອງ ຄຳແນະນຳສະບັບນີ້.

### ມາດຕາ 25. ການລົງທຶນຂອງຕ່າງປະເທດ

ບຸກຄົນ ແລະ ນິຕິບຸກຄົນຕ່າງປະເທດ ສາມາດລົງທຶນຮ່ວມໃນສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຊຶ່ງອັດຕາສ່ວນການຖືຮຸ້ນຂອງຕ່າງປະເທດຕໍ່າສຸດ ສິບ (10) ສ່ວນຮ້ອຍ, ແຕ່ສູງສຸດບໍ່ເກີນ ສາມສິບ (30) ສ່ວນຮ້ອຍ ຂອງທຶນທັງໝົດ.

ອັດຕາສ່ວນການຖືຮຸ້ນຂອງຕ່າງປະເທດ ສາມາດປ່ຽນແປງໄດ້ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ສອດຄ່ອງກັບລະບຽບກົດໝາຍ.

ສຳລັບການນຳເຂົ້າທຶນຂອງຜູ້ຖືຮຸ້ນຕ່າງປະເທດ ຕ້ອງປະຕິບັດຕາມກົດໝາຍ ວ່າດ້ວຍການລົງທຶນ, ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ລະບຽບການທີ່ກ່ຽວຂ້ອງ ແລະ ແຈ້ງຢ່າງເປັນລາຍລັກອັກສອນໃຫ້ທະນາຄານແຫ່ງ ສປປ ລາວ ຊາບ.

### ມາດຕາ 26. ທຶນຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດກູ້ຢືມ ແລະ ໄດ້ຮັບການຊ່ວຍເຫຼືອລ້າທັງພາຍໃນ ແລະ ຕ່າງປະເທດ.

ສຳລັບການກູ້ຢືມຈາກຕ່າງປະເທດສູງສຸດບໍ່ເກີນ ສາມສິບ (30) ສ່ວນຮ້ອຍ ຂອງຍອດສິນເຊື່ອຂອງສະຖາບັນການເງິນ, ການກູ້ຢືມຈາກພາຍໃນ ແລະ ຕ່າງປະເທດຕ້ອງແຈ້ງ ແລະ ໄດ້ຮັບການອະນຸມັດຢ່າງເປັນລາຍລັກອັກສອນຈາກທະນາຄານແຫ່ງ ສປປ ລາວ.

ສຳລັບທຶນຊ່ວຍເຫຼືອລ້າ ທັງພາຍໃນ ແລະ ຕ່າງປະເທດຕ້ອງແຈ້ງໃຫ້ ທະນາຄານແຫ່ງ ສປປ ລາວ ຮັບຊາບ.

### ມາດຕາ 27. ທຶນໂຄງການການເງິນຈຸລະພາກ

ເພື່ອດຳເນີນໂຄງການການເງິນຈຸລະພາກ ຕ້ອງມີທຶນໃນການດຳເນີນງານຢ່າງໜ້ອຍ ໜຶ່ງຕື້ (1.000.000.000) ກີບ ແລະ ປະຕິບັດເງື່ອນໄຂຄົບຖ້ວນຕາມມາດຕາ 59, 60, 61 ແລະ 63 ຂອງ ດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກເລກທີ 460/ລບ, ລົງວັນທີ 03 ຕຸລາ 2012.

### ມາດຕາ 28. ການຈັດຕັ້ງປະຕິບັດກ່ອນການສິ້ນສຸດໂຄງການ

ກ່ອນການສິ້ນສຸດໂຄງການການເງິນຈຸລະພາກ ຜູ້ຈັດຕັ້ງປະຕິບັດໂຄງການ ຕ້ອງລົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາເງື່ອນໄຂຫັນເປັນສະຖາບັນການເງິນຮູບແບບອື່ນ ຫຼື ຍຸບເລີກຕາມເງື່ອນໄຂຕົວຈິງ.

**ມາດຕາ 29. ການສິ້ນສຸດໂຄງການ ແລະ ການຖອນໃບອະນຸຍາດ**

ໂຄງການການເງິນຈຸລະພາກຈະສິ້ນສຸດ ແລະ ທະນາຄານແຫ່ງ ສປປ ລາວ ຈະຖອນໃບອະນຸຍາດໃນກໍລະນີດັ່ງນີ້:

1. ໂຄງການບໍ່ໄດ້ປະຕິບັດຕາມຄໍາໝັ້ນສັນຍາ;
2. ບໍ່ໄດ້ດໍາເນີນໂຄງການຕາມບົດວິພາກ ຫຼື ດໍາເນີນງານບໍ່ມີປະສິດທິຜົນ;
3. ບໍ່ສາມາດປະຕິບັດລະບອບບັນຊີ ແລະ ການລາຍງານໄດ້ ສາມ (3) ຄັ້ງ ຕິດຕໍ່ກັນ;
4. ດໍາເນີນງານບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 30. ຄ່າທໍານຽມ ແລະ ຄ່າບໍລິການ**

ຜູ້ທີ່ຂໍອະນຸຍາດດໍາເນີນທຸລະກິດສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຫຼື ຂໍອະນຸຍາດດໍາເນີນໂຄງການການເງິນຈຸລະພາກ ຕ້ອງຈ່າຍຄ່າທໍານຽມ ແລະ ບໍລິການໃນການຄົ້ນຄວ້າອອກອະນຸຍາດດໍາເນີນທຸລະກິດໃຫ້ແກ່ທະນາຄານແຫ່ງ ສປປ ລາວ ດັ່ງນີ້:

1. ຄ່າທໍານຽມຍື່ນເອກະສານຈໍານວນ ຫ້າແສນ (500.000) ກີບ;
2. ຄ່າອອກໃບອະນຸຍາດດໍາເນີນທຸລະກິດ ທີ່ມີທຶນຈົດທະບຽນແຕ່ຈໍານວນ ສອງຮ້ອຍລ້ານ (200.000.000) ກີບ ຂຶ້ນໄປ ຕ້ອງຈ່າຍ ສູນຈຸດຫ້າ (0,5) ສ່ວນຮ້ອຍ ຂອງທຶນຈົດທະບຽນ;
3. ຜູ້ຂໍອະນຸຍາດດໍາເນີນທຸລະກິດທີ່ຍື່ນຄໍາຮ້ອງຄືນໃໝ່ ແຕ່ສອງ (2) ຄັ້ງຂຶ້ນໄປ ຕ້ອງຈ່າຍຄ່າບໍລິການຕາມທີ່ກໍານົດໄວ້ໃນຂໍ້ 1 ຂອງມາດຕານີ້.

ສໍາລັບຈໍານວນຄໍາຮ້ອງທີ່ຖືກປະຕິເສດຈາກທະນາຄານແຫ່ງ ສປປ ລາວ, ຜູ້ຂໍອະນຸຍາດສາມາດປະກອບເອກະສານຄືນໃໝ່ ພາຍໃນກໍານົດ ສາມສິບ (30) ວັນ ໂດຍບໍ່ໄດ້ຈ່າຍຄ່າທໍານຽມຄືນໃໝ່ອີກ.

**ມາດຕາ 31. ຄ່າຄຸ້ມຄອງປະຈໍາປີ**

ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ໂຄງການການເງິນຈຸລະພາກ ຕ້ອງເສຍຄ່າຄຸ້ມຄອງປະຈໍາປີຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງຄໍາແນະນໍາຈັດຕັ້ງປະຕິບັດສະບັບນີ້.

**ມາດຕາ 32. ການຈັດຕັ້ງປະຕິບັດບົດບັນຍັດຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ**

ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງປະຕິບັດຕາມບົດບັນຍັດຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ດັ່ງນີ້:

1. ຂໍ້ຫ້າມໃນການດໍາເນີນທຸລະກໍາ ແລະ ການຖອນໃບອະນຸຍາດ ໃຫ້ປະຕິບັດຕາມມາດຕາ 17 ແລະ 18 ຂອງຄໍາແນະນໍາສະບັບນີ້;
2. ການເກັບຮັກສາຂໍ້ມູນ ແລະ ລະບົບການບັນຊີ ໃຫ້ປະຕິບັດຕາມມາດຕາ 20 ແລະ 21 ຂອງຄໍາແນະນໍາສະບັບນີ້.

## ໝວດທີ IV
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 33. ມາດຕະການຕໍ່ຜູ້ລະເມີດ**

ສະຖາບັນການເງິນຈຸລະພາກ, ຜູ້ຖືຮຸ້ນ, ຜູ້ບໍລິຫານ ແລະ ພະນັກງານຂອງສະຖາບັນການເງິນຈຸລະພາກ ຫາກລະເມີດດຳລັດ ແລະ ຄຳແນະນຳວ່າດ້ວຍສະຖາບັນການເງິນຈຸລະພາກ ຈະຖືກປະຕິບັດມາດຕະການ ດັ່ງຕໍ່ໄປນີ້:

1. ມາດຕະການ ຄັ້ງທີ 1
   - ແຈ້ງເຕືອນຢ່າງເປັນລາຍລັກອັກສອນ;
   - ເຊີນເຂົ້າມາສຶກສາອົບຮົມ.
2. ມາດຕະການ ຄັ້ງທີ 2

   ແຈ້ງເຕືອນຢ່າງເປັນລາຍລັກອັກສອນ ຄັ້ງທີ 2, ພ້ອມທັງປັບໃໝເປັນຈຳນວນເງິນ ໜຶ່ງຮ້ອຍພັນ (100.000) ກີບ ຕໍ່ວັນ.
3. ມາດຕະການ ຄັ້ງທີ 3
   - ກໍລະນີບໍ່ໄດ້ຮັບການປັບປຸງແກ້ໄຂແຕ່ ສິບຫ້າ (15) ເຖິງ ເກົ້າສິບ (90) ວັນ ຈະຖືກປັບໃໝເປັນຈຳນວນເງິນ ໜຶ່ງລ້ານ (1.000.000) ກີບ;
   - ພາຍຫຼັງ ເກົ້າສິບ (90) ວັນ ທີ່ໄດ້ຖືກປັບໃໝ, ແຕ່ສະຖາບັນການເງິນຈຸລະພາກ ຫາກຍັງສືບຕໍ່ລະເມີດ, ທະນາຄານແຫ່ງ ສປປ ລາວ ຈະແຈ້ງໃຫ້ໂຈະການດຳເນີນທຸລະກິດຊົ່ວຄາວເປັນເວລາ ຮ້ອຍແປດສິບ (180) ວັນ;
   - ພາຍຫຼັງ ຮ້ອຍແປດສິບ (180) ວັນ ທີ່ຖືກແຈ້ງໃຫ້ໂຈະການດຳເນີນທຸລະກິດຊົ່ວຄາວ, ແຕ່ສະຖາບັນການເງິນຈຸລະພາກ ຍັງບໍ່ມີການປັບປຸງແກ້ໄຂລາຍງານໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ແລະ ແຈ້ງໃຫ້ພາກສ່ວນກ່ຽວຂ້ອງ ແລະ ສັງຄົມຮັບຊາບ.

**ມາດຕາ 34. ການລະເມີດລະບອບການລາຍງານ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ໂຄງການການເງິນຈຸລະພາກ ທີ່ສົ່ງລາຍງານຊັກຊ້າ, ລາຍງານບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມລະບອບການລາຍງານທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ເລກທີ 460/ລບ, ລົງວັນທີ 3 ຕຸລາ 2012 ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີສົ່ງລາຍງານຊັກຊ້າ:
   - ຈະຖືກແຈ້ງເຕືອນເປັນລາຍລັກອັກສອນ;
   - ໃນກໍລະນີທີ່ແຈ້ງເຕືອນເປັນຄັ້ງທີສອງ (2) ແລ້ວ, ແຕ່ຍັງສືບຕໍ່ບໍ່ໄດ້ຮັບການປັບປຸງແກ້ໄຂ ຫຼື ເປັນການລະເມີດທີ່ໜັກໜ່ວງ ຈະຖືກປັບໃໝ ໜຶ່ງຮ້ອຍຫ້າສິບພັນ (150.000) ກີບ ຕໍ່ວັນ;
2. ກໍລະນີສົ່ງລາຍງານບໍ່ຖືກຕ້ອງ:
   - ຈະຖືກແຈ້ງເຕືອນເປັນລາຍລັກອັກສອນ;

- ໃນກໍລະນີທີ່ແຈ້ງເຕືອນເປັນຄັ້ງທີສອງ (2) ແລ້ວ, ແຕ່ຍັງສືບຕໍ່ບໍ່ປັບປຸງແກ້ໄຂຫຼື ເປັນການລະເມີດທີ່ໜັກໜ່ວງ ຈະຖືກປັບໃໝ ໜຶ່ງຮ້ອຍພັນ (100.000) ກີບ ຕໍ່ວັນ.

3. ກໍລະນີທີ່ມີການປອມແປງຕົວເລກ ຫຼື ຂໍ້ມູນບົດລາຍງານ ຈະຖືກປັບໃໝ ດັ່ງນີ້:
   - ຜູ້ຮັບຜິດຊອບບັນຊີ ສອງຮ້ອຍພັນ (200.000) ກີບ ຕໍ່ຄັ້ງ, ພ້ອມທັງແຈ້ງໃຫ້ປັບປຸງແກ້ໄຂຂໍ້ມູນໃຫ້ຖືກຕ້ອງ;
   - ຜູ້ບໍລິຫານ ສາມຮ້ອຍພັນ (300.000) ກີບ ຕໍ່ຄັ້ງ, ພ້ອມທັງແນະນຳໃຫ້ມີຄວາມຮັບຜິດຊອບໃນການກວດກາ.

**ມາດຕາ 35. ການປະຕິບັດນະໂຍບາຍ**

ຜູ້ຖືຮຸ້ນ ຫຼື ຜູ້ບໍລິຫານ ຂອງສະຖາບັນການເງິນຈຸລະພາກທີ່ຖືກຖອນໃບອະນຸຍາດດຳເນີນທຸລະກິດ ສາມາດປະກອບສຳນວນເອກະສານຂໍສ້າງຕັ້ງ ແລະ ດຳເນີນທຸລະກິດຄືນໃໝ່ພາຍຫຼັງສອງ (2) ປີ ໃນກໍລະນີດັ່ງນີ້:

1. ບໍ່ໄດ້ຖືກສານຕັດສິນເປັນບຸກຄົນລົ້ມລະລາຍ;
2. ບໍ່ຕິດພັນກັບຄະດີທາງການເມືອງ, ການເງິນໃນສະຖານຍັກຍອກ, ສໍ້ໂກງ, ລັກຊັບ, ຄ້າຂາຍຢາເສບຕິດ, ອາວຸດສົງຄາມ ແລະ ອື່ນໆ ທີ່ເປັນການລະເມີດກົດໝາຍຮ້າຍແຮງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 36. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ປະຈຳພາກ ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

ບັນດາກົມ ແລະ ທຽບເທົ່າກົມພາຍໃນທະນາຄານແຫ່ງ ສປປ ລາວ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ໂຄງການການເງິນຈຸລະພາກ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຕາມພາລະບົດບາດຂອງໃຜລາວ.

**ມາດຕາ 37. ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ດຣ ສອນພາວ ໄຟສິດ